# ສົນທິສັນຍາສະບັບເລກທີ່ 138

# ສົນທິສັນຍາວ່າດ້ວຍອາຍຸຕ່ຳສຸດຂອງການເຮັດວຽກ

ກອງປະຊຸມໃຫຍ່ຂອງອົງການແຮງງານສາກົນ ໄດ້ຈັດໃຫ້ມີການປະຊຸມຂື້ນທີ່ ເຊີແນວ
ປະເທດເຊີວິດເຊີ
ແລນ ໂດຍຄະນະປະສານງານຂອງສຳນັກງານແຮງງານສາກົນ ແລະ
ໄດ້ປະຊຸມກັນໃນກອງປະຊຸມໃຫຍ່ຂອງອົງ
ການແຮງງານສາກົນ ຄັ້ງທີ່ 58 ເມື່ອວັນທີ່ ໖ ມິຖຸນາ 1973 ແລະ
ໄດ້ຕົກລົງກັນເລື່ອງການກຳນົດຂໍ້ສະເໜີບາງ
ປະການໃນເລື່ອງ ອາຍຸຂັ້ນຕ່ຳຂອງການເຮັດວຽກ ເປັນຫົວຂໍ້ທີ່ 4
ໃນລະບຽບວາລະການປະຊຸມນີ້ ແລະ ຕັ້ງຂໍ້ສັງ
ເກດເຖິງ ຂໍ້ກຳນົດຂອງສົນທິສັນຍາ ວ່າດ້ວຍອາຍຸຂັ້ນຕ່ຳ (ວຽກອຸດສະຫະກຳ) ປີ 1919,
ສົນທິສັນຍາວ່າດ້ວຍ
ອາຍຸຂັ້ນຕ່ຳ (ວຽກໃນທະເລ) ປີ 1920, ສົນທິສັນຍາວ່າດ້ວຍອາຍຸຂັ້ນຕ່ຳ (ວຽກກະສິກຳ) ປີ
1921, ສົນທິສັນຍາ
ວ່າດ້ວຍອາຍຸຂັ້ນຕ່ຳ (ວຽກຈັດວາງສິນຄ້າໃນເຮືອ ແລະ ວຽກຊ່າງໄຟ) ປີ 1921,
ສົນທິສັນຍາວ່າດ້ວຍອາຍຸຂັ້ນ
ຕ່ຳ (ການເຮັດວຽກທີ່ບໍ່ແມ່ນວຽກອຸດສະຫະກຳ) ປີ 1932, ສົນທິສັນຍາວ່າດ້ວຍອາຍຸຂັ້ນຕ່ຳ
(ວຽກໃນທະເລ) (ສະບັບດັດແກ້) ປີ 1937, ສົນທິສັນຍາວ່າດ້ວຍອາຍຸຂັ້ນຕ່ຳ (ວຽກປະມົງ)
ປີ 1959 ແລະ ສົນທິສັນຍາວ່າດ້ວຍ
ອາຍຸຂັ້ນຕ່ຳ (ວຽກໃຕ້ດິນ) ປີ 19໖5 ແລະ ພິຈາລະນາວ່າ
ເຖິງເວລາທີ່ຈະເຮັດການສານທ້ອໄປສະບັບໜຶ່ງວ່າ
ດ້ວຍເລື່ອງນີ້ ຊຶ່ງຈະຄ່ອຍໆ ແທນທີ່ບົດ
ກາສານທີ່ມີຢູ່ຊຶ່ງໃຊ້ກັບປະເທດເສດຖະກິດຈຳກັດ ເພື່ອຄວາມມຸ່ງໝາຍ

ທີ່ຈະໃຫ້ບັນລຸ ເຖິງຄວາມສຳເລັດ ໃນການເລີກໃຊ້ແຮງງານເດັກໂດຍສິ້ນເຊີງ ແລະ
ໄດ້ກຳນົດວ່າ ກາສານນີ້ຈະ
ຕ້ອງມີຮູບລັກສະນະ ຕາມສົນທິສັນຍາສາກົນ ກຳນົດສົນທິສັນຍາຕໍ່ໄປນີ້ ຊຶ່ງອາດເອີ້ນວ່າ
ສົນທິສັນຍາວ່າດ້ວຍ
ອາຍຸຂັ້ນຕ່ຳ ປີ 1973 ເມື່ອວັນທີ່ 26 ເດືອນ ມິຖຸນາ ປີ 1973.

## ມາດຕາ 1

ສະມາຊິກແຕ່ລະປະເທດ ຊຶ່ງສົນທິສັນຍານີ້ ໃຊ້ບັງຄັບ
ຕອບຮັບຮອງທີ່ຈະດຳເນີນນະໂຍບາຍແຫ່ງຊາດ
ໂດຍມີຈຸດມຸ່ງໝາຍ ທີ່ຈະຍົກເລີກການໃຊ້ແຮງງານເດັກ ຢ່າງມີປະສິດທິພາບ ແລະ
ຮັບຮອງທີ່ຈະຍົກອາຍຸຂັ້ນ
ຕ່ຳ ຂອງການເຮັດວຽກ ຫຼື ທຳງານ
ໃຫ້ສູງຂື້ນຈົນເຖິງລະດັບທີ່ສອດຄ່ອງກັບການພັດທະນາທາງຮ່າງກາຍ ແລະ
ຈິດໃຈຢ່າງສົມບູນທີ່ສຸດຂອງເຍົາວະຊົນ.

## ມາດຕາ 2

1. ສະມາຊິກແຕ່ລະປະເທດ ຊຶ່ງໃຫ້ສັດຕະຍາບັນ ສົນທິສັນຍານີ້
ຈະຕ້ອງລະບຸໄວ້ໃນຄຳປະກາດ ແນບ
ທ້າຍ ການໃຫ້ສັດຕະຍາບັນຂອງປະເທດຕົນ ເຖິງອາຍຸຂັ້ນຕ່ຳທີ່ຍອມໃຫ້ເຮັດວຽກ
ຫຼື ທຳງານ ໃນອານາ
ເຂດແຫ່ງປະເທດຕົນ ແລະ
ບົນຍານພາຫະນະຂົນສົ່ງທີ່ຈົດທະບຽນໃນອານາເຂດຂອງປະເທດຕົນ ການ
ໃຕ້ບັງຄັບຕາມມາດຕາ 4 ເຖິງ 8 ຂອງສົນທິສັນຍານີ້
ບໍ່ໃຫ້ຮັບບຸກຄົນທີ່ມີອາຍຸຕ່ຳກວ່ານັ້ນ ໃນການເຂົ້າ
ເຮັດວຽກ ຫຼື ທຳງານໃນອາຊີບໃດໆ.

2. ສະມາຊິກແຕ່ລະປະເທດ ຊຶ່ງໄດ້ໃຫ້ສັດຕະຍາບັນສົນທິສັນຍານີ້ອາດແຈ້ງໃຫ້ຜູ້ອຳນວຍການໃຫ່ຍຂອງສຳນັກງານແຮງງານສາກົນ ຮູ້ພາຍຫຼັງ ໃນຄຳປະກາດສະບັບຕໍ່ໆໄປ ວ່າຕົນລະບຸອາຍຸຂັ້ນຕ່ຳສູງຂື້ນກວ່າທີ່ໄດ້ລະບຸໄວ້ແຕ່ກອ່ນ.

3. ອາຍຸຂັ້ນຕ່ຳທີ່ໄດ້ລະບຸໄວ້ຕາມຂໍ້ 1 ຂອງມາດຕານີ້ ຈະຕ້ອງບໍ່ຕ່ຳກວ່າອາຍຸທີ່ສຳເລັດການສຶກສາພາກບັງຄັບແລະ ໃນອາຊີບໃດໆ ກໍ່ຕາມຈະຕ້ອງບໍ່ຕ່ຳກວ່າ 15 ປີ.

4. ແມ້ຈະມີຍັດຕີຂໍ້ 3 ຂອງມາດຕານີ້ ປະເທດສະມາຊິກ ຊຶ່ງເສດຖະກິດ ແລະ ສິ່ງອຳນວຍຄວາມສະດວກທາງການສຶກສາ ຂອງຕົນຍັງພັດທະນາບໍ່ທັນພຽງພໍນັ້ນ ໃນຄັ້ງທຳອິດອາດຈະລະບຸອາຍຸຂັ້ນຕ່ຳເປັນ 14 ປີ ກໍ່ໄດ້ ພາຍຫຼັງປຶກສາຫາລືກັບອົງການຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານທີ່ກ່ຽວຂ້ອງ ໃນການທີ່ອົງການດັ່ງກ່າວມີຢູ່.

5. ສະມາຊິກແຕ່ລະປະເທດ ຊຶ່ງໄດ້ລະບຸອາຍຸຂັ້ນຕ່ຳໄວ້ 14 ປີ ຕາມຄວາມໃນບົດບັນຍັດ ຂອງ ຂໍ້ກອ່ນ ຈະຕ້ອງລະບຸຕາມສົນທິສັນຍາໄວ້ ເພື່ອລາຍງານໃຫ້ປະເທດຕົນຊຶ່ງສະເຫນີຕາມມາດຕາ 22ຂອງກົດຫມາຍຂອງອົງການແຮງງານສາກົນ:

(ກ) ວ່າເຫດຜົນຂອງປະເທດຕົນ ໃນການດຳເນີນງານເຊັ່ນນັ້ນ ຍັງຄົງຢູ່ ຫຼື ບໍ່.

(ຂ) ວ່າຕົນສະຫຼະສິດທິທີ່ຈະຖືເອົາປະໂຫຍດຈາກບົດບັນຍັດດັ່ງກ່າວນັບແຕ່ວັນທີ່ລະບຸໄວ້.

## ມາດຕາ 3

1. ອາຍຸຂັ້ນຕ່ຳທີ່ຍອມໃຫ້ເຮັດວຽກ ຫຼື ທຳງານຊະນິດໃດ ຊະນິດໜຶ່ງ
ຊຶ່ງໂດຍລັກສະນະ ຫຼື ສະພາບແວດ
ລ້ອມຂອງວຽກນັ້ນ ເມື່ອປະຕິບັດຈະເປັນອັນຕະລາຍຕໍ່ສຸຂະພາບຄວາມປອດໄພ ຫຼື
ສິນລະທຳຂອງ
ເຍົາວະຊົນຈະຕ້ອງບໍ່ຕ່ຳກວ່າ 18 ປີ.

2. ຊະນິດວຽກງານ ຫຼື ວຽກຕາມຂໍ້ 1 ຂອງມາດຕານີ້
ຈະຕ້ອງກຳນົດຂື້ນໂດຍກົດໝາຍ ຫຼືລະບຽບຂໍ້ບັງຄັບ
ພາຍໃນປະເທດ ຫຼື ໂດຍເຈົ້າໜ້າທີ່ຜູ້ມີອຳນາດ ພາຍຫຼັງການປືກສາຫາລື
ກັບອົງການຜູ້ໃຊ້ແຮງງານ ແລະ ຜູ້
ອອກແຮງງານທີ່ກ່ຽວຂ້ອງຖ້າວ່າອົງການດັ່ງກ່າວມີຢູ່.

3. ແມ້ຈະມີບົດບັນຍັດຂອງຂໍ້ 1 ຂອງມາດຕານີ້ ກົດໝາຍ ຫຼື ລະບຽບຂໍ້ບັງຄັບ
ພາຍໃນປະເທດ ຫຼື ເຈົ້າໜ້າ
ທີ່ ຜູ້ມີອຳນາດ ພາຍຫຼັງການປືກສາຫາລື ກັບອົງການຜູ້ໃຊ້ແຮງງານ ແລະ
ຜູ້ອອກແຮງງານທີ່ກ່ຽວຂ້ອງ ຖ້າອົງການດັ່ງກ່າວມີຢູ່ ອະນຸຍາດໃຫ້ມີການເຮັດວຽກ
ຫຼື ທຳງານຕັ້ງແຕ່ອາຍຸ 16 ປີ ກໍ່ໄດ້ ໂດຍມີເງື່ອນ
ໄຂວ່າ ສຸຂະພາບ ຄວາມປອດໄພ ແລະ ສິນລະທຳຂອງເຍົາວະຊົນ
ທີ່ກ່ຽວຂ້ອງຈະຕ້ອງໄດ້ຮັບການຄຸ້ມ
ຄອງຢ່າງເຕັມທີ່ ແລະ ຍາວນານ ໄດ້ຮັບການສອນໂດຍສະເພາະຢ່າງພຽງພໍ ຫຼື
ການຝຶກອາຊີບໃນສາ
ຂາວຽກທີ່ກ່ຽວຂ້ອງ.

## ມາດຕາ 4

1. ຕາມເທົ່າທີ່ຈຳເປັນເຈົ້າໜ້າທີ່ຜູ້ມີອຳນາດ ພາຍຫຼັງກາປືກສາຫາລື
ກັບອົງການຜູ້ໃຊ້ແຮງງານ ແລະ ຜູ້

ອອກແຮງງານທີ່ກ່ຽວຂ້ອງ ໃນກໍລະນີອົງການດັ່ງກ່າວມີຢູ່

ອາດຍົກເວັ້ນການປະຕິບັດຕາມສົນທິສັນຍາ

ນີ້ ກັບການເຮັດວຽກ ຫຼື ການທຳງານບາງປະເທດ ຊຶ່ງກໍ່ໃຫ້ເກີດບັນຫາດ້ານເນື້ອໃນ

ແລະ ບັນຫາພິເສດ ກ່ຽວກັບການໃຊ້ສົນທິສັນຍານີ້ກໍ່ໄດ້.

2. ສະມາຊິກແຕ່ລະປະເທດ ຊຶ່ງໃຫ້ສັດຕະຍາບັນສົນທິສັນຍານີ້

ຈະຕ້ອງລົງລາຍການກ່ຽວກັບປະເພດຂອງ

ການເຮັດວຽກ ຫຼື ວຽກໃດໆ ທີ່ອາດໄດ້ຮັບຍົກເວັ້ນຕາມຄວາມໃນຂໍ້ໜຶ່ງ

ຂອງມາດຕານີ້ ໂດຍໃຫ້ເຫດຜົນ

ຂອງການຍົກເວັ້ນດັ່ງກ່າວ ໄວ້ໃນລາຍງານສະບັບທຳອິດຂອງປະເທດຕົນ

ກ່ຽວກັບການປະຕິບັດຕາມສົນ

ທິສັນຍາສະບັບນີ້ຊຶ່ງສະເໜີຕາມມາດຕາ 22 ຂອງລັດຖະທຳມະນູນ

ຂອງອົງການແຮງງານສາກົນ ແລະ

ຈະຕ້ອງແຈ້ງໃນບົດລາຍງານສະບັບຕໍ່ໆໄປ ເຖິງຖານະຂອງກົດໝາຍ ແລະ

ການປະຕິບັດຂອງຕົນ ໃນ

ສ່ວນທີ່ກ່ຽວກັບ ປະເພດຂອງການເຮັດວຽກ ຫຼື ງານທີ່ໄດ້ຮັບຍົກເວັ້ນນັ້ນ

ຕະຫຼອດຈົນຂອບເຂດທີ່ໄດ້ມີຜົນ

ຫຼື ສະເໜີໃຫ້ມີຜົນຕາມສົນທິສັນຍາສະບັບນີ້ ໃນສ່ວນທີ່ກ່ຽວຂ້ອງ

ກັບປະເພດຂອງການເຮັດວຽກ ຫຼື ງານດັ່ງກ່າວ.

໓. ການເຮັດວຽກ ຫຼື ວຽກທີ່ຢູ່ພາຍໃຕ້ມາດຕາ 3 ຂອງສົນທິສັນຍານີ້

ຈະບໍ່ໄດ້ຮັບການຍົກເວັ້ນຈາກການປະ

ຕິບັດຕາມສົນທິສັນຍາ ຕາມຄວາມໝາຍຂອງມາດຕານີ້.

## ມາດຕາ 5

1. ປະເທດສະມາຊິກຊຶ່ງເສດຖະກິດ ແລະ ສິ່ງອຳນວຍຄວາມສະດວກ

ໃນການບໍລິຫານຍັງບໍ່ທັນໄດ້ຮັບ

ການພັດທະນາບໍ່ພຽງພໍ ອາດຈຳກັດຂອບເຂດການໃຊ້
ສົນທິສັນຍານີ້ໄດ້ຕັ້ງແຕ່ເລີ້ມຕົ້ນ ພາຍຫຼັງການ
ປຶກສາຫາລື ກັບອົງການຜູ້ໃຊ້ແຮງງານ ແລະ
ຜູ້ອອກແຮງງານທີ່ກ່ຽວຂ້ອງ ໃນກໍລະນີທີ່ອົງການດັ່ງກ່າວມີຢູ່.

2. ສະມາຊິກແຕ່ລະປະເທດ ຊຶ່ງຖືເອົາປະໂຫຍດຈາກບົດບັນຍັດຂອງຂໍ້ 1
ຕາມມາດຕານີ້ຈະຕ້ອງລະບຸສາ
ຂາ ຂອງກິດຈະການທາງເສດຖະກິດ ຫຼື ປະເພດຂອງວິສາຫະກິດ
ຊຶ່ງປະເທດຕົນຈະໃຊ້ບົດບັນຍັດ ສົນທິ
ສັນຍານີ້ໄວ້ໃນຄຳປະກາດຜົນ ຢູ່ທ້າຍການໃຫ້ສັດຕະຍາບັນຂອງປະເທດຕົນ.

3. ບົດບັນຍັດຂອງສົນທິສັນຍາ ຈະຕ້ອງນຳມາໃຊ້ໄດ້ຢ່າງໜ້ອຍ
ທີ່ສຸດກັບກິດຈະການຕໍ່ໄປນີ້: ການກໍ່ສ້າງ
ເໝືອງ, ອຸດສາຫະກຳ, ການກໍ່ສ້າງ, ໄຟຟ້າ, ແກັດ ແລະ ນ້ຳ
ບໍລິການອະນາໄມສຸຂະພາບ, ການຂົນສົ່ງ, ສາງສິນຄ້າ, ການສື່ສານຄົມມະນາຄົມ,
ການປູກຝັງ ແລະ ກິດຈະການ...ອື່ນໆຊຶ່ງສ່ວນໃຫ່ຍຈະທຳການຜະ
ລິດ ເພື່ອຈຸດປະສົງທາງການຄ້າແຕ່ຍົກເວັ້ນການຜະລິດພາຍໃນຄອບຄົວ ແລະ
ການຜະລິດຂະໜາດ
ນ້ອຍ ເພື່ອການບໍລິໂພກພາຍໃນທ້ອງຖິ່ນ ແລະ ບໍ່ມີການຈ້າງຄົນງານເປັນປະຈຳ.

4. ປະເທດສະມາຊິກໃດ ໄດ້ຈຳກັດຂອບເຂດ ຂອງການໃຊ້ສົນທິສັນຍານີ້:

(ກ) ຈະຕອ້ງລະບຸຖານະທົ່ວໄປ ກ່ຽວກັບການເຮັດວຽກ ຫຼື ວຽກຂອງເຢົາວະຊົນ
ແລະ ເດັກໃນສາຂາ
ວິຊາອາຊີບຕ່າງໆ ຂອງກິດຈະກຳທີ່ໄດ້ຮັບການຍົກເວັ້ນ
ຈາກຂອບເຂດການໃຊ້ສົນທິສັນຍານີ້ ຊຶ່ງອາດດຳ
ເນີນໄປເພື່ອໃຫ້ມີການໃຊ້ບົດບັນຍັດຂອງສົນທິສັນຍາກ້ວາງຂວາງຍິ່ງຂຶ້ນໄວ້ໃນບົ
ດລາຍງານຂອງປະເທດ
ຕົນ ຕາມມາດຕາ 22 ຂອງລັດຖະທຳມະນູນຂອງອົງການແຮງງານສາກົນ.

(ຂ)

ອາດຂະຫຍາຍຂອງເຂດການໃຊ້ຢ່າງເປັນທາງການໃນເວລາໃດກໍ່ໄດ້ໂດຍ
ສົ່ງຄໍາປະກາດໄປຍັງຜູ້
ອໍານວຍການໃຫ່ຍ ສໍານັກງານແຮງງານສາກົນ.

## ມາດຕາ ໖

ສົນທິສັນຍານີ້ບໍ່ໃຊ້ກັບວຽກງານທີ່ເດັກ ແລະ ເຍົາວະຊົນເຮັດໃນໂຮງຮຽນ
ເພື່ອການສຶກສາທົ່ວໆ
ໄປ ການສຶກສາທາງອາຊີວະ ຫຼື ທາງເຕັກນິກ ຫຼື ໃນສະຖາບັນການຝຶກອົບຮົມອື່ນໆ
ຫຼື ບໍ່ໃຊ້ກັບວຽກທີ່
ກະທໍາໂດຍບຸກຄົນທີ່ມີອາຍຸຢ່າງໜ້ອຍທີ່ສຸດ 14 ປີ ໃນວິສາຫະກິດຕ່າງໆ
ໃນຖານະທີ່ວຽກງານດັ່ງກ່າວ
ດໍາເນີນໄປຕາມເງື່ອນໄຂ ທີ່ກໍານົດໂດຍເຈົ້າໜ້າທີ່
ຜູ້ຄອງອໍານາພາຍຫຼັງການປຶກສາຫາລືກັບອົງການຜູ້
ໃຊ້ແຮງງານ ແລະ ຜູ້ອອກແຮງງານທີ່ກ່ຽວຂ້ອງໃນກໍລະນີທີ່ອົງການດັ່ງກ່າວມີຢູ່
ແລະ ເປັນສ່ວນໜຶ່ງຂອງ:

(ກ) ຫຼັກສູດການສຶກສາ ຫຼື ການຝຶກອົບຮົມຊຶ່ງໂຮງຮຽນ ຫຼື ສະຖາບັນ
ຝຶກອົບຮົມເປັນຜູ້ຮັບຜິດຊອບ ເບື້ອງຕົ້ນ.

(ຂ) ໂຄງການຝຶກອົບຮົມສ່ວນໃຫ່ຍ ຫຼື ທັງໝົດໃນວິສາຫະກິດໜຶ່ງ
ຊຶ່ງເຈົ້າໜ້າທີ່ຜູ້ມີອໍານາດໄດ້ອະ
ນຸມັດ ຫຼື

(ຄ) ໂຄງການແນະນໍາ ປະຖຸມນິເທດ
ຊຶ່ງມຸ້ງໝາຍທີ່ຈະເຮັດໃຫ້ການເລືອກວຽກອາຊີບ ຫຼື ແນວທາງ
ການຝຶກອົບຮົມງ່າຍຂື້ນ.

## ມາດຕາ 7

1. ກົດໝາຍ ຫຼື ຂໍ້ບັງຄັບພາຍໃນປະເທດ ອາດຈະອະນຸຍາດໃຫ້ມີການເຮັດວຽກ ຫຼື ການທຳງານຂອງບຸກຄົນ

   ອາຍຸ 13 ເຖິງ 15 ປີ ກ່ຽວກັບວຽກເບົາໄດ້ ຊຶ່ງເປັນວຽກທີ່:

   (ກ) ບໍ່ເປັນອັນຕະລາຍຕໍ່ສຸຂະພາບ ຫຼື ການພັດທະນາ ແລະ

   (ຂ) ບໍ່ໃຫ້ເສຍຫາຍຕໍ່ການເຂົ້າຮຽນ ໃນໂຮງຮຽນ

   ການເຂົ້າຮ່ວມໃນໂຄງການປະຖົມນິເທດທາງອາຊີ

   ວະ ຫຼື ໂຄງການຝຶກອົບຮົມ ຊຶ່ງອະນຸມັດໂດຍເຈົ້າໜ້າທີ່ຜູ້ມີອຳນາດ ຫຼື ບໍ່ເຮັດໃຫ້ເສຍຫາຍຕໍ່

   ຄວາມສາມາດທີ່ຈະໄດ້ຮັບປະໂຫຍດຈາກຄຳສອນທີ່ໄດ້ຮັບ.

2. ກົດໝາຍ ຫຼື ຂໍ້ບັງຄັບພາຍໃນປະເທດ ອາດອະນຸມັດໃຫ້ມີການເຮັດວຽກ ຫຼື ການທຳງານຂອງບຸກຄົນ ຊຶ່ງມີອາຍຸຢ່າງນ້ອຍທີ່ສຸດ 15 ປີ ແຕ່ຍັງບໍ່ສຳເລັດການສຶກສາພາກບັງຄັບດ້ວຍກໍ່ໄດ້ ໃນວຽກຊຶ່ງເປັນໄປຕາມຂໍ້ກຳນົດ ທີ່ລະບຸໄວ້ໃນຂໍ້ (ກ) ແລະ ຂໍ້ (ຂ) ຂອງຂໍ້ 1 ຂອງມາດຕານີ້.

3. ເຈົ້າໜ້າທີ່ຜູ້ມີອຳນາດ ກຳນົດບັນດາ ກິດຈະກຳ ຊຶ່ງການເຮັດວຽກ ຫຼື ການທຳງານນັ້ນໆ ອາດຈະໄດ້ຮັບ

   ອະນຸຍາດຕາມຂໍ້ 1 ແລະ 2 ຂອງມາດຕານີ້ໄດ້ ແລະ

ຈະຕ້ອງກຳນົດຈຳນວນຊົ່ວໂມງລະຫວ່າງການເຮັດ

ວຽກ ຫຼື ການທຳງານດັ່ງກ່າວ ທີ່ອາດໄດ້ຮັບການຮັບຮອງ ແລະ ກຳນົດເງື່ອນໄຂການເຮັດວຽກ ຫຼືການທຳ

ງານດັ່ງກ່າວ ອາດໄດ້ຮັບການເຮັດວຽກ ລະຫວ່າງເວລາທີ່ກຳນົດໄວ້ນັ້ນກໍ່ໄດ້ ແລະ ຈະຕ້ອງກຳນົດບັນດາ

ເງື່ອນໄຂ ຊຶ່ງການເຮັດວຽກ ຫຼື ການທຳງານເຊັ່ນວ່າ ອາດໄດ້ຮັບການເຮັດວຽກທີ່ກຳນົດນັ້ນກໍ່ໄດ້.

4. ເຖິງແມ່ນວ່າຈະມີບົດບັນຍັດຂອງຂໍ້ 1 ແລະ 2 ຂອງມາດຕານີ້ ປະເທດສະມາຊິກຊຶ່ງຖືເອົາປະໂຫຍດຈາກ ບົດບັນຍັດຂອງວັກ 4 ຂອງຂໍ້ 2 ອາດກຳນົດອາຍຸ 12 ປີ ແລະ 14 ປີ ແທນ ອາຍຸ 13 ປີ ແລະ 15 ປີ ໃນ ວັກ1 ແລະ ກຳນົດ ອາຍຸ 14ປີ ແທນອາຍຸ 15 ປີ ໃນຂໍ້ 2 ຂອງມາດຕານີ້ ກໍ່ໄດ້ ຕາມທີ່ຕົນຍັງຖືປະໂຫຍດ ດັ່ງກ່າວຢູ່.

## ມາດຕາ ໘

1. ຫຼັງຈາກການປຶກສາຫາລືກັບອົງການຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານທີ່ກ່ຽວຂ້ອງ ໃນຖານະທີ່ອົງການ ດັ່ງກ່າວມີຢູ່ ພະນັກງານເຈົ້າໜ້າທີ່ອາດຍອມໃຫ້ມີ ຂໍ້ຍົກເວັ້ນສຳລັບການຫ້າມກ່ຽວກັບ ການເຮັດວຽກ ຫຼື ການທຳງານທີ່ກຳນົດໄວ້ໃນຂໍ້ 2 ຂອງສົນທິສັນຍານີ້ກໍ່ໄດ້ ເພື່ອຈຸດປະສົງເຊັ່ນການເຂົ້າຮ່ວມໃນການສະແດງສິນລະປະ ໂດຍອອກໃບອະນຸຍາດໃຫ້ໂດຍສະເພາະ.
2. ໃບອະນຸຍາດທີ່ອອກຈະຕ້ອງ ຈຳກັດຈຳນວນຊົ່ວໂມງ ຊຶ່ງການເຮັດວຽກ ຫຼື ການທຳງານ ໄດ້ຮັບອະນຸຍາດ ຕາມເວລານັ້ນ ແລະ ກຳນົດເງື່ອນໄຂ ຊຶ່ງການເຮັດວຽກ ຫຼືການທຳງານໄດ້ຮັບອະນຸຍາດຕາມເງື່ອນໄຂທີ່ ໄດ້ກຳນົດໄວ້.

## ມາດຕາ ໙

1. ພະນັກງານເຈົ້າໜ້າທີ່ຈະໃຊ້ມາດຕະການ ທີ່ຈຳເປັນທັງໝົດ
ລວມທັງການກຳນົດໂທດທີ່ເໝາະສົມ,
ເພື່ອຮັບປະກັນການໃຊ້ບັງຄັບບົດບັນຍັດຂອງສົນທິສັນຍານີ້ ຢ່າງມີປະສິດທິພາບ.

2. ກົດໝາຍ ຫຼື ຂໍ້ບັງຄັບພາຍໃນລັດ ຫຼື ພະນັກງານເຈົ້າໜ້າທີ່
ຈະຕ້ອງກຳນົດຕົວບຸກຄົນ, ຜູ້ຮັບຜິດຊອບ ຕາມບົດບັນຍັດ
ເພື່ອໃຫ້ບັງເກີດຜົນຕາມສົນທິອສັນຍານີ້.

3. ກົດໝາຍ ຫຼື ຂໍ້ບັງຄັບພາຍໃນລັດ ຫຼື ພະນັກງສານເຈົ້າໜ້າທີ່
ຈະຕ້ອງກຳນົດໃຫ້ມີທະບຽນ ຫຼື ເອກະສານ ອື່ນໆ ຊຶ່ງຜູ້ຈ້າງຈະຕ້ອງເກັບຮັກສາ
ແລະ ມີໄວ້ໃຊ້ທະບຽນ ຫຼື ເອກະສານດັ່ງກ່າວຈະຕ້ອງລະບຸ ແລະ ອາຍຸ ຫຼື ວັນເກີດ
ຊຶ່ງຮັບຮອງຢ່າງຖືກຕ້ອງເທົ່າທີ່ກະທຳໄດ້ຂອງບຸກຄົນ ຊຶ່ງຜູ້ໃຊ້ແຮງງານວ່າຈ້າງ ຫຼື
ຜູ້ເຮັດວຽກ ໃຫ້ຜູ້ໃຊ້ແຮງງານ ແລະ ເປັນຜູ້ມີອາຍຸຕ່ຳກວ່າ 18 ປີ.

## ມາດຕາ 10

1. ຕາມຂໍ້ກຳນົດທີ່ລະບຸໄວ້ໃນຂໍ້ນີ້ ສົນທິສັນຍານີ້
ແກ້ໄຂສົນທິສັນຍາວ່າດ້ວຍອານຸຂັ້ນຕ່ຳ (ວຽກງານອຸດ ສະຫະກຳ) ເມື່ອປີ 1919,
ສົນທິສັນຍາວ່າດ້ວຍອາຍຸຂັ້ນຕ່ຳ (ວຽກງານໃນທະເລ) ປີ 1920, ສົນທິສັນ
ຍາວ່າດ້ວຍອາຍຸຂັ້ນຕ່ຳ (ວຽກງານກະເສດ) ປີ 1921,
ສົນທິສັນຍາວ່າດ້ວຍອາຍຸຂັ້ນຕ່ຳ (ວຽກງານ ຈັດວາງສິນຄ້າໃນເຮືອ ແລະ
ວຽກງານຊ່າງໄຟ) ປີ 1921, ສົນທິສັນຍາວ່າດ້ວຍອາຍຸຂັ້ນຕ່ຳ (ການຈ້າງ
ວຽກງານທີ່ບໍ່ແມ່ນວຽກງານອຸດສາຫະກຳ) ປີ 1932,
ສົນທິສັນຍາວ່າດ້ວຍອາຍຸຂັ້ນຕ່ຳ (ວຽກງານໃນທະ ເລ) (ສະບັບປັບປຸງ) ປີ 1936,
ສົນທິສັນຍາວ່າດ້ວຍອາຍຸຂັ້ນຕ່ຳ (ງານອຸດສາຫະກຳ) (ສະບັບປັບປຸງ) ປີ 1937,
ສົນທິສັນຍາວ່າດ້ວຍອາຍຸຂັ້ນຕ່ຳ
(ການວ່າຈ້າງເຮັດວຽກງານທີ່ບໍ່ແມ່ນວຽກງານອຸດສາຫະກຳ) (ສະບັບປັບປຸງ) ປີ

1937, ສົນທິສັນຍາວ່າດ້ວຍອາຍຸຂັ້ນຕໍ່າ (ວຽກງານປະມົງ) ປີ 1959 ແລະ ສົນທິສັນຍາວ່າດ້ວຍອາຍຸຂັ້ນຕໍ່າ (ວຽກງານໃຕ້ດິນ) ປີ 1965.

2. ການໃຊ້ຂໍ້ບັງຄັບສົນທິສັນຍານີ້ ຈະຕ້ອງບໍ່ອັດການໃຫ້ສັດຕະຍາບັນເພີ່ມຕໍ່ໄປ, ກ່ຽວກັບສົນທິສັນຍາວ່າ ດ້ວຍອາຍຸຂັ້ນຕໍ່າ (ວຽກງານໃນທະເລ) (ສະບັບປັບປຸງ) ປີ 1936, ສົນທິສັນຍາວ່າດ້ວຍອາຍຸຂັ້ນຕໍ່າ (ວຽກງານອຸດສາຫະກໍາ) (ສະບັບປັບປຸງດັດແກ້) ປີ 1937, ສົນທິສັນຍາວ່າດ້ວຍອາຍຸຂັ້ນຕໍ່າ (ການຈ້າງ ວຽກງານທີ່ບໍ່ແມ່ນວຽກງານອຸດສາຫະກໍາ)(ສະບັບປັບປຸງດັດແກ້) ປີ 1937, ສົນທິສັນຍາວ່າ ດ້ວຍອາຍຸ ຂັ້ນຕໍ່າ (ວຽກງານປະມົງ) ປີ 1959 ຫຼື ສົນທິສັນຍາວ່າດ້ວຍອາຍຸຂັ້ນຕໍ່າ (ວຽກງານໃຕ້ດິນ) ປີ 1965.

3. ສົນທິສັນຍາວ່າດ້ວຍອາຍຸຂັ້ນຕໍ່າ (ງານອຸດສາຫະກໍາ) ປີ 1919, ສົນທິສັນຍາວ່າດ້ວຍອາຍຸຂັ້ນຕໍ່າ (ວຽກງານໃນທະເລ) 1920, ສົນທິສັນຍາວ່າດ້ວຍອາຍຸຂັ້ນຕໍ່າ (ວຽກງານການກະເສດ) ປີ 1921, ແລະ ສົນທິສັນຍາວ່າດ້ວຍອາຍຸຂັ້ນຕໍ່າ (ວຽກງານຈັດວາງສິນຄ້າໃນເຮືອ ແລະ ວຽກຊ່າງໄຟ) ປີ 1921, ຈະໄດ້ອັດການໃຫ້ສັດຕະຍາບັນເພີ່ມເຕີມຕໍ່ໄປ, ເມື່ອທາກພາຄີສົນທິສັນຍາທັງຫມົດຍິນຍອມການອັດ ການໃຫ້ສັດຕະຍາບັນດັ່ງກ່າວ ໂດຍການໃຫ້ສັດຕະຍາບັນຂໍ້ນີ້ ຫຼື ໂດຍລໍາປະກາດແຈ້ງໄປຍັງຜູ້ອໍານວຍ ການໃຫຍ່ຂອງສໍານັກງານແຮງງານສາກົນ.

4. ເມື່ອພັນທະຂອງສົນທິສັນຍານີ້ໄດ້ຮັບການຍອມຮັບ

(ກ) ໂດຍລັດສະມາຊິກ ຊຶ່ງເປັນພາຄີຂອງສົນທິສັນຍາວ່າດ້ວຍອາຍຸຂັ້ນຕໍ່າ (ວຽກງານອຸດສາຫະກໍາ) (ສະບັບປັບປຸງ) ປີ 1937 ແລະ ໄດ້ລະບຸອາຍຸຂັ້ນຕໍ່າບໍ່ນ້ອຍກວ່າ 15 ປີ, ຕາມເນື້ອໃນ ໃນອັກ 2 ຂອງສົນທິສັນຍານີ້ ກໍຈະມີຜົນທາງນິຕິໄນ ເປັນການບອກເລີກຖອນສົນທິສັນຍານັ້ນໂດຍທັນທີ.

(ຂ) ໃນສ່ວນກ່ຽວກັບການຈ້າງວຽກງານ ທີ່ບໍ່ແມ່ນວຽກອຸດສາຫະກໍາຕາມທີ່ໄດ້ກໍານົດໄວ້ ໃນສົນທິສັນ

ຍາວ່າດ້ວຍອາຍຸຂັ້ນຕ່ຳ (ການຈ້າງ ວຽກງານທີ່ບໍ່ແມ່ນວຽກງານອຸດສາຫະກຳ) ປີ 1932, ໂດຍລັດສະມາ ຊິກ ຊຶ່ງເປັນພາຄີສົນທິສັນຍານັ້ນ ກໍຈະມີຜົນທາງນິຕິໄນ, ບອກເລີກຖອນສົນທິສັນຍານັ້ນໂດຍທັນທີ.

(ຄ) ສ່ວນທີ່ກ່ຽວກັບການຈ້າງເຮັດວຽກ ອຸດສາຫະກຳ ຕາມທີ່ໄດ້ກຳນົດໄວ້ໃນສົນທິສັນຍາວ່າດ້ວຍ ອາຍຸຂັ້ນຕ່ຳ (ການເຮັດວຽກງານທີ່ບໍ່ແມ່ນວຽກງານອຸດສາຫະກຳ) (ສະບັບປັບປຸງ) ປີ 1937 ໂດຍແມ່ນ ລັດສະມາຊິກ; ຊຶ່ງເປັນພາຄີສົນທິສັນຍານັ້ນ ແລະ ກໍ່ໄດ້ລະບຸອາຍຸຂັ້ນຕ່ຳບໍ່ນ້ອຍກວ່າ 15 ປີ. ຕາມເນື້ອ ໃນ ໃນມາດຕາ 2 ຂອງສົນທິສັນຍານີ້ ກໍຈະມີຜົນທາງນິຕິໄນ ເປັນການບົ່ງບອກຍົກເລີກສົນທິສັນຍານັ້ນ ໂດຍທັນທີ.

(ງ) ໃນສ່ວນກ່ຽວກັບການຈ້າງວຽກງໃນທະເລນັ້ນ ລັດຊຶ່ງເປັນພາຄີ ສົນທິສັນຍາວ່າ ດ້ວຍອາຍຸຂັ້ນຕ່ຳ (ວຽກໃນທະເລ) (ສະບັບປັບປຸງ) ປີ 193໖ ແລະ ໄດ້ລະບຸອາຍຸຂັ້ນຕ່ຳບໍ່ນ້ອຍກວ່າ 15 ປີ ຕາມເນື້ອໃນ ໃນ ມາດຕາ 2 ຂອງສົນທິສັນຍານີ້ ຫຼື ລັດສະມາຊິກລະບຸວ່າ ມາດຕາ 3 ຂອງສົນທິສັນຍານີ້ໃຊ້ກັບການຈ້າງ ວຽກງານໃນທະເລ ກໍຈະມີຜົນທາງນິຕິໄນ ເປັນການບົ່ງບອກຍົກເລີກສົນທິສັນຍານັ້ນໂດຍທັນທີ.

(ຈ) ໃນສ່ວນກ່ຽວກັບການຈ້າງວຽກງານປະມົງໃນທະເລ ໂດຍລັດສະມາຊິກ ຊຶ່ງເປັນພາຄີສົນທິສັນຍາ ວ່າດ້ວຍອາຍຸຂັ້ນຕ່ຳ (ວຽກງານປະມົງ) ປີ 1959 ແລະ ໄດ້ລະບຸອາຍຸຂັ້ນຕ່ຳບໍ່ໜ້ອຍກວ່າ 15 ປີ ຕາມເນື້ອ ໃນມາດຕາ 2 ຂອງສົນທິສັນຍານີ້ ຫຼື ລັດສະມາຊິກລະບຸວ່າ ມາດຕາ 3 ຂອງສົນທິສັນຍານີ້ໃຊ້ກັບການ ຈ້າງວຽກງານປະມົງໃນທະເລ ກໍຈະມີຜົນທາງນິຕິໄນ ເປັນການຍົກເລີກສົນທິສັນຍານັ້ນໂດຍທັນທີ.

(ສ) ໂດຍລັດສະມາຊິກ ຊຶ່ງເປັນພາຄີສົນທິສັນຍາວ່າດ້ວຍອາຍຸຂັ້ນຕ່ຳ (ວຽກງານໃຕ້ດິນ) ປີ 19໖5 ແລະ ໄດ້ລະບຸອາຍຸຂັ້ນຕ່ຳບໍ່ໜ້ອຍກວ່າອາຍຸ ທີ່ລະບຸໄວ້ຕາມເນື້ອໃນຂອງສົນທິສັນຍານັ້ນ. ຕາມຄວາມ ໝາຍໃນມາດຕາ 2

ຂອງສົນທິສັນຍານີ້, ປະເທດສະມາຊິກລະບຸວ່າອາຍຸດັ່ງກ່າວ ໃຊ້ກັບການຈ້າງວຽກງານໃຕ້ດິນໃນບໍ່ແຮ່ ໂດຍອາໃສອຳນາດຕາມຄວາມໝາຍໃນມາດຕາ 3 ຂອງສົນທິສັນຍາ ກໍຈະມີຜົນ ທາງນິຕິໄນ ເປັນການບົ່ງບອກຍົກເລີກສົນທິສັນຍານັ້ນໂດຍທັນທີ.

5. ການຍອມຮັບພັນທະຂອງສົນທິສັນຍານີ້

(ກ) ຈະມີຜົນເປັນບົ່ງບອກຍົກເລີກສົນທິສັນຍາວ່າດ້ວຍອາຍຸຂັ້ນຕ່ຳ (ວຽກງານອຸດສາຫະກຳ) ປີ 1919 ຕາມມາດຕາ 12 ຂອງສົນທິສັນຍານີ້.

(ຂ) ໃນສ່ວນກ່ຽວກັບການຈ້າງວຽກງານໃນທະເລ ຈະມີຜົນເປັນການຍົກເລີກສົນທິສັນຍາວ່າດ້ວຍອາ ຍຸຂັ້ນຕ່ຳ (ວຽກງານໃນທະເລ) ປີ 1920 ຕາມມາດຕາ 10 ສົນທິສັນຍານີ້ ແລະ ສົນທິສັນຍາວ່າດ້ວຍອາ ຍຸຂັ້ນຕ່ຳ (ວຽກງານຈັດວາງສິນຄ້າໃນເຮືອ ແລະ ວຽກງານຊ່າງໄຟ) ປີ 1921 ຕາມມາດຕາ 12 ຂອງສົນທິສັນຍານີ້.

ຖ້າເມື່ອສົນທິສັນຍານີ້ມີຜົນບັງຄັບໃຊ້.

## ມາດຕາ 11

ການໃຫ້ສັດຕະຍາບັນສົນທິສັນຍານີ້ ຢ່າງເປັນທາງການຈະຕ້ອງສະເໜີຕໍ່ອຳນວຍການໃຫຍ່ຂອງສຳນັກງານແຮງງານສາກົນ ເພື່ອການລົງທະບຽນ.

## ມາດຕາ 12

1. ສົນທິສັນຍາມີຜົນຜູກພັນສະເພາະລັດສະມາຊິກຂອງ ອົງການແຮງງານສາກົນ ຊຶ່ງການໃຫ້ສັດຕະຍາບັນ ຂອງຕົນໄດ້ຮັບການລົງທະບຽນກັບຜູ້ອຳນວຍການໃຫຍ່ແລ້ວ.

2. ໃຫ້ສົນທິສັນຍານີ້ມີຜົນບັງຄັບໃຊ້ ເມື່ອພົ້ນໄລຍະເວລາສອງເດືອນ ນັບແຕ່ມື້ທີ່ມີການໃຫ້ສັດຕະຍາບັນ ຂອງລັດສະມາຊິກທັງສອງໄດ້ຮັບການລົງທະບຽນກັບຜູ້ອຳນວຍການໃຫຍ່ແລ້ວ.

3. ຫຼັງຈາກນັ້ນໃຫ້ສົນທິສັນຍານີ້ມີຜົນບັງຄັບໃຊ້ ສຳລັບສະມາຊິກໃດໜຶ່ງ ເມື່ອພົ້ນໄລຍະເວລາ ສິບສອງ ເດືອນ ນັບຈາກວັນທີ່ມີການໃຫ້ສັດຕະຍາບັນຂອງສະມາຊິກນັ້ນ ໄດ້ຮັບການລົງທະບຽນແລ້ວ.

## ມາດຕາ 13

1. ສະມາຊິກທີ່ໄດ້ໃຫ້ສັດຕະຍາບັນແກ່ສົນທິສັນຍານີ້ ອາດບອກເລີກຖອນສັດຕະຍາບັນໄດ້, ໃນເມື່ອຫາກ ພົ້ນໄລຍະເວລາ ສິບປີ ນັບແຕ່ມື້ທີ່ສົນທິສັນຍາມີຜົນບັງຄັບໃຊ້ເປັນຄັ້ງທຳອິດ; ໂດຍການສະເໜີຕໍ່ອຳນວຍການໃຫຍ່ ຂອງສຳນັກງານແຮງງານສາກົນ ເພື່ອການລົງທະບຽນການບອກເລີກຖອນນັ້ນ ຈະບໍ່ມີຜົນ ບັງຄັບໃຊ້ຈົນກວ່າ ຈະພົ້ນໄລຍະເວລາໜຶ່ງປີ ນັບແຕ່ມື້ລົງທະບຽນ.

2. ສະມາຊິກແຕ່ລະລັດທີ່ໄດ້ໃຫ້ສັດຕະຍາບັນແກ່ສົນທິສັນຍານີ້ແລ້ວ ແລະ ບໍ່ໄດ້ໃຊ້ສິດທິໃນການບອກ ເລີກຖອນ, ທີ່ໄດ້ກຳນົດໄວ້ໃນມາດຕານີ້ ພາຍໃນໜຶ່ງປີນັບແຕ່ມື້ນັ້ນ. ໄລຍະເວລາ ສິບປີດັ່ງກ່າວຢູ່ໃນວັກກ່ອນນັ້ນກໍໃຫ້ຜູກພັນຕໍ່ໄປອີກສິບປີ ແລະ ຫຼັງຈາກນັ້ນ ກໍອາດບອກເລີກຖອນສົນທິສັນຍານີ້ໄດ້ໃນເມື່ອພົ້ນກຳນົດໄລຍະເວລາສະໄໝລະສິບປີ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕານີ້.

## ມາດຕາ 14

1. ຜູ້ອຳວຍການໃຫຍ່ ຂອງສຳນັກງານແຮງງານສາກົນ ຈະຕ້ອງໃຫ້ສະມາຊິກທັງໝົດຂອງອົງການແຮງງານ ກ່ຽວກັບການລົງທະບຽນການໃຫ້ສັດຕະຍາບັນ ແລະ ການບອກເລີກຖອນທັງໝົດທີ່ລັດສະມາຊິກທັງ ຫຼາຍຂອງອົງການໄດ້ສະເໜີຕົນ.
2. ເພື່ອແຈ້ງໃຫ້ລັດສະມາຊິກທັງຫຼາຍຂອງອົງການແຮງງານສາກົນ ໄດ້ຮັບຊາບໃນການລົງທະບຽນໃຫ້ສັດ ຕະຍາບັນຄັ້ງທີສອງຂອງຕົນແລ້ວ ຜູ້ອຳ ນວຍການໃຫຍ່ ຈະຕ້ອງດຶງດູດຄວາມສົນໃຈຂອງສະມາຊິກທັງ ຫຼາຍຂອງອົງການໃຫ້ຊາບ ກ່ຽວກັບວັນທີສົນທິສັນຍາຈະມີຜົນບັງຄັບໃຊ້.

## ມາດຕາ 15

1. ຜູ້ອຳວຍການໃຫຍ່ ຂອງສຳນັກງານແຮງງານສາກົນ ສະເໜີລາຍລະອຽດຢ່າງຄົບຖ້ວນຂອງການໃຫ້ ສັດຕະຍາບັນ ແລະ ການເລີກຖອນທັງໝົດທີ່ຕົນໄດ້ລົງທະບຽນ, ຕາມບົດບັນຍັດຂອງມາດຕາກ່ອນນັ້ນ ຕໍ່ເລຂາທິການຂອງອົງການສະຫະປະຊາຊາດ ເພື່ອການລົງທະບຽນຕາມມາດຕາ 102 ຂອງກົດບັດສະຫະປະຊາຊາດ.

## ມາດຕາ 16

ເມື່ອໃດກໍ່ຕາມຫາກພິຈາລະນາເຫັນວ່າ ເປັນສິ່ງຈຳເປັນກໍ່ໃຫ້ຄະນະກຳມະການຂະແໜງຄຸ້ມຄອງຂອງ ສຳນັກງານແຮງງານສາກົນ, ສະເໜີລາຍງານກ່ຽວກັບ ການເຮັດໃຫ້ວຽກງານຂອງສົນທິສັນຍານີ້ຕໍ່ທີ່ປະ ຊຸມໃຫຍ່ ແລະ ກໍໃຫ້ພິຈາລະນາເບິ່ງຄວາມເໝາະສົມ

ໃນການກຳນົດກ່ຽວກັບການປັບປຸງແກ້ໄຂສົນທິ ສັນຍານີ້ທັງຫມົດ ຫຼື ແຕ່ບາງສ່ວນໄວ້ໃນວາລະການປະຊຸມຂອງການປະຊຸມນັ້ນ.

## ມາດຕາ 17

1. ຫາກມີປະຊຸມໃຫຍ່ນັ້ນ ຮັບຮອງເອົາສົນທິສັນຍາໃຫມ່ ທີ່ປັບປຸງແກ້ໄຂສົນທິສັນຍານີ້ທັງຫມົດ ຫຼື ແຕ່ບາງ ສ່ວນແລ້ວ, ເວັ້ນເສຍແຕ່ສົນທິສັນຍາຂໍ້ໃຫມ່ນັ້ນ ຈະກຳນົດໄວ້ເປັນຢ່າງອື່ນ.

   (ກ) ການໃຫ້ສັດຕະຍາບັນແກ່ສົນທິສັນຍາທີ່ປັບປຸງແກ້ໄຂໃຫມ່ ໂດຍລັດສະມາຊິກຈະມີຜົນ ໂດຍທາງ ນິຕິໄນ, ເປັນການບອກເລີກຖອນສົນທິສັນຍານີ້ທັນທີ ໂດຍບໍ່ຕ້ອງຄຳນຶ່ງເຖິງບົດບັນຍັດຂອງມາດຕາ 13 ຂ້າງຕົ້ນນັ້ນ; ຖ້າເມື່ອສົນທິສັນຍາທີ່ປັບປຸງແກ້ໄຂໃຫມ່ນັ້ນ ມີຜົນບັງຄັບໃຊ້ແລ້ວ.

   (ຂ) ນັບແຕ່ມື້ສົນທິສັນຍາທີ່ປັບປຸງແກ້ໄຂໃຫມ່ນັ້ນ ມີຜົນບັງຄັບໃຊ້, ສົນທິສັນຍານີ້ຈະຍຸດຕິການແກ້ໄຂ ໃຫ້ສະມາຊິກໃຫ້ສັດຕະຍາບັດອີກຕໍ່ໄປ.

2. ບໍ່ວ່າຈະກໍລະນີໃດໆ ສົນທິສັນຍານີ້ກໍຍັງມີຜົນບັງຄັບໃຊ້ທັງຮູບແບບ ແລະ ເນື້ອໃນທີ່ເປັນຢູ່ ສຳລັບສະມາ ຊິກທີ່ໄດ້ໃຫ້ສັດຕະຍາບັນແກ່ສົນທິສັນຍານີ້ໄປແລ້ວ ແຕ່ຍັງບໍ່ໄດ້ໃຫ້ສັດຕະຍາບັນແກ່ສົນທິສັນຍາທີ່ ປັບ ປຸງແກ້ໄຂໃຫມ່.

## ມາດຕາ 18

ຂໍ້ຄວາມຂອງສົນທິສັນຍານີ້ ລວມທັງສະບັບ ເປັນພາສາອັງກິດ ແລະ ພາສາຝລັ່ງເສດມີຜົນບັງຄັບໃຊ້ເທົ່າ ທຽມກັນ.